ສາລະບານ


ມະຕິຕົກລົງ ........ 4
ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ ........ 4
ລັດຖະດຳລັດ ........ 5
ກົດໝາຍ ວ່າດ້ວຍ ອຸດສາຫະກຳປຸງແຕ່ງ ........ 6
ພາກທີ I ບົດບັນຍັດທົ່ວໄປ ........ 6
ມາດຕາ 1. ໜ້າທີ່ຂອງກົດໝາຍ ........ 6
ມາດຕາ 2. ອຸດສາຫະກຳປຸງແຕ່ງ ........ 6
ມາດຕາ 3. ການສົ່ງເສີມອຸດສາຫະກຳປຸງແຕ່ງ ........ 6
ມາດຕາ 4. ການປົກປັກຮັກສາສິ່ງແວດລ້ອມ ........ 6
ມາດຕາ 5. ການປົກປ້ອງ ສິດຜົນປະໂຫຍດຂອງຜູ້ລົງທຶນ ........ 7
ມາດຕາ 6. ການຮ່ວມມືສາກົນ ........ 7
ມາດຕາ 7. ຂອບເຂດການນຳໃຊ້ກົດໝາຍ ........ 7
ພາກທີ II ກິດຈະການໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ........ 7
ໝວດທີ 1 ກິດຈະການໂຮງງານ ........ 7
ມາດຕາ 8. ໂຮງງານອຸດສາຫະກຳແລະຫັດຖະກຳ ປຸງແຕ່ງ ........ 7
ມາດຕາ 9. ປະເພດໂຮງງານ ........ 7
ມາດຕາ 10. ລະດັບໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ........ 8
ມາດຕາ 11. ການດຳເນີນກິດຈະການໂຮງງານອຸດສາຫະກຳແລະຫັດຖະກຳ ປຸງແຕ່ງ ........ 9
ໝວດທີ 2 ການຄຸ້ມຄອງເຄື່ອງຈັກ. ........ 9
ມາດຕາ 12. ການຂຶ້ນບັນຊີ ແລະ ການຄິດໄລ່ແຮງມ້າປຽບທຽບເຄື່ອງຈັກ ........ 9
ມາດຕາ 13. ການຍົກຍ້າຍເຄື່ອງຈັກ ........ 9
ໝວດທີ 3 ເງື່ອນໄຂການດຳເນີນກິດຈະການໂຮງງານ ........ 9
ມາດຕາ 14. ເງື່ອນໄຂການດຳເນີນກິດຈະການໂຮງງານ ........ 9
ມາດຕາ 15. ການຈົດທະບຽນຄຸນນະພາບ ແລະມາດຕະຖານຜະລິດຕະພັນ ........ 10
ໝວດທີ 4 ສາຍພົວພັນລະຫວ່າງໂຮງງານ ກັບ ແຫລ່ງວັດຖຸດິບ ........ 10
ມາດຕາ 16. ສາຍພົວພັນລະຫວ່າງໂຮງງານກັບແຫລ່ງວັດຖຸດິບ ........ 10
ມາດຕາ 17. ນະໂຍບາຍຊຸກຍູ້ການຜະລິດວັດຖຸດິບ ........ 10
ໝວດທີ 5 ການປົກປັກຮັກສາສິ່ງແວດລ້ອມ ........ 10
ມາດຕາ 18. ການປົກປັກຮັກສາສິ່ງແວດລ້ອມ ........ 10
ມາດຕາ 19. ເຂດກຳຈັດສິ່ງເສດເຫລືອ ຂອງໂຮງງານ ........ 10
ມາດຕາ 20. ມາດຕະການປົກປັກຮັກສາສິ່ງແວດລ້ອມ ........ 10
ໝວດທີ 6 ການຂະຫຍາຍ, ການຍົກຍ້າຍ ແລະ ການໂອນ ກິດຈະການໂຮງງານ ........ 11
ມາດຕາ 21. ການຂະຫຍາຍ ໂຮງງານ ........ 11

ມາດຕາ 22. ການຍົກຍ້າຍ ໂຮງງານ ....................................................................11
ມາດຕາ 23. ການໃຫ້ເຊົ່າ, ການໂອນ ກິດຈະການໂຮງງານ ....................................................11
ໝວດທີ 7 ພື້ນທີ່, ເຂດ, ນິຄົມ ແລະ ສະຖາບັນ ຫລື ສູນຄົ້ນຄ້ວາທົດລອງອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ....................................................................................................11
ມາດຕາ 24. ພື້ນທີ່ອຸດສາຫະກຳ ........................................................................11
ມາດຕາ 25. ເຂດອຸດສາຫະກຳ ..........................................................................12
ມາດຕາ 26. ນິຄົມອຸດສາຫະກຳ ........................................................................12
ມາດຕາ 27. ສະຖາບັນ ຫລື ສູນຄົ້ນຄ້ວາ ທົດລອງອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ...........12
ພາກທີ III ການລົງທຶນ ແລະ ການສົ່ງເສີມ ອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ...........................12
ໝວດທີ 1 ການລົງທຶນ ......................................................................................12
ມາດຕາ 28. ການສົ່ງເສີມການລົງທຶນໃສ່ອຸດສາຫະກຳແລະຫັດຖະກຳ ປຸງແຕ່ງ .........................12
ມາດຕາ 29. ຮູບການລົງທຶນ ..............................................................................12
ໝວດທີ 2 ການສົ່ງເສີມ ອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ..........................................13
ມາດຕາ 30. ເນື້ອໃນການສົ່ງເສີມ .......................................................................13
ມາດຕາ 31. ທຶນ ແລະ ກອງທຶນສົ່ງເສີມ ................................................................13
ມາດຕາ 32. ເຕັກໂນໂລຊີ ແລະ ເຄື່ອງຈັກ ...............................................................13
ມາດຕາ 33. ວິຊາການ .....................................................................................13
ມາດຕາ 34. ການຝຶກອົບຮົມວິຊາຊີບ....................................................................14
ມາດຕາ 35. ຂໍ້ມູນຂ່າວສານ ..............................................................................14
ມາດຕາ 36. ການອຳນວຍຄວາມສະດວກ .................................................................14
ມາດຕາ 37. ການໃຫ້ບູລິມະສິດ ..........................................................................14
ມາດຕາ 38. ນະໂຍບາຍ ພາສີແລະອາກອນ ..............................................................14
ມາດຕາ 39. ການປົກປ້ອງຜະລິດຕະພັນພາຍໃນ..........................................................15
ມາດຕາ 40. ການຕະຫລາດ ...............................................................................15
ພາກທີ IV ສິດ ແລະ ພັນທະຂອງຜູ້ດຳເນີນກິດຈະການໂຮງງານ ອຸດສາຫະກຳແລະຫັດຖະກຳ ປຸງແຕ່ງ ..15
ມາດຕາ 41. ສິດ ຂອງຜູ້ດຳເນີນກິດຈະການໂຮງງານ ...................................................15
ມາດຕາ 42. ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານ ...............................................15
ພາກທີ V ອົງການຄຸ້ມຄອງ ແລະ ກວດກາ ...............................................................16
ໝວດທີ 1 ອົງການຄຸ້ມຄອງ ................................................................................16
ມາດຕາ 43. ອົງການຄຸ້ມຄອງ .............................................................................16
ມາດຕາ 44. ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ຫັດຖະກຳ ..............................16
ມາດຕາ 45. ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ຫັດຖະກຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ..........................................................................................17
ມາດຕາ 46. ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ຫັດຖະກຳເມືອງ .....................17

ມາດຕາ 47. ສິດ ແລະ ໜ້າທີ່ຂອງອຳນາດການປົກຄອງບ້ານ ....17
ໝວດທີ 2 ອົງການກວດກາ ....18
ມາດຕາ 48. ອົງການກວດກາ ....18
ມາດຕາ 49. ການກວດກາ ....18
ມາດຕາ 50. ຮູບການກວດກາ ....18
ພາກທີ VI ການແກ້ໄຂ ຂໍ້ຂັດແຍ່ງ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ ....18
ມາດຕາ 51. ການແກ້ໄຂຂໍ້ຂັດແຍ່ງ ....18
ມາດຕາ 52. ນະໂຍບາຍຕໍ່ຜູ້ມີຜົນງານ ....19
ມາດຕາ 53. ມາດຕະການຕໍ່ຜູ້ລະເມີດ ....19
ມາດຕາ 54. ມາດຕະການກ່າວເຕືອນ ແລະ ສຶກສາອົບຮົມ ....19
ມາດຕາ 55. ມາດຕະການໃຊ້ແທນຄ່າເສັຍຫາຍ ....19
ມາດຕາ 56. ມາດຕະການປັບໃໝ ....19
ມາດຕາ 57. ມາດຕະການທາງອາຍາ ....20
ມາດຕາ 58. ມາດຕະການໂທດເພີ້ມ ....20
ພາກທີ VII ບົດບັນຍັດສຸດທ້າຍ ....20
ມາດຕາ 59. ການຈັດຕັ້ງປະຕິບັດ....20
ມາດຕາ 60. ຜົນສັກສິດ....20

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ສະພາແຫ່ງຊາດ ເລກທີ 01-99 /ສພຊ

# ມະຕິຕົກລົງ

**ຂອງສະພາແຫ່ງຊາດ ແຫ່ງ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການຕົກລົງຮັບຮອງເອົາກົດໝາຍ

ວ່າດ້ວຍ ອຸດສາຫະກຳປຸງແຕ່ງ

---

- ອີງຕາມມາດຕາ 40 ຂໍ້ 2 ຂອງລັດຖະທຳມະນູນ ແລະ ມາດຕາ 3 ຂໍ້ 2 ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ;
- ອີງຕາມການສະເໜີຂອງ ນາຍົກ ລັດຖະມົນຕີ ສະບັບເລກທີ 08/ນຍ, ລົງວັນທີ 8/3/99;

ພາຍຫລັງທີ່ໄດ້ຄົ້ນຄວ້າພິຈາລະນາຢ່າງກ້ວາງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ໃນກອງປະຊຸມເທື່ອທີ 3 ສະໄໝສາມັນຂອງສະພາແຫ່ງຊາດ ຊຸດທີ IV, ໃນວາລະປະຊຸມຕອນບ່າຍຂອງ ວັນທີ 3 ເມສາ 1999.

**ກອງປະຊຸມໄດ້ຕົກລົງ:**

**<u>ມາດຕາ 1</u>:** ຮັບຮອງເອົາກົດໝາຍ ວ່າດ້ວຍ ອຸດສາຫະກຳປຸງແຕ່ງ ດ້ວຍຄະແນນສຽງຢ່າງເປັນເອກະສັນ.

**<u>ມາດຕາ 2</u>:** ມະຕິຕົກລົງສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 3 ເມສາ 1999

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 10 ສປປ

# ລັດຖະດຳລັດ

**ຂອງປະທານປະເທດ**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ກ່ຽວກັບການປະກາດໃຊ້ກົດໝາຍ ວ່າດ້ວຍ
ອຸດສະຫະກຳປຸງແຕ່ງ

---

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53, ຂໍ້ 1;
- ອີງຕາມມະຕິຕົກລົງຂອງກອງປະຊຸມເທື່ອທີ 3 ສະໄໝສາມັນ ຂອງສະພາແຫ່ງຊາດ ຊຸດທີ IV ກ່ຽວກັບການຮັບຮອງເອົາກົດໝາຍ ວ່າດ້ວຍອຸດສະຫະກຳປຸງແຕ່ງ ສະບັບເລກທີ 01-99/ສພຊ ລົງວັນທີ 3 ເມສາ 1999;
- ອີງຕາມການສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 03/ຄປຈ, ລົງວັນທີ 6 ເມສາ 1999 .

ປະທານປະເທດ
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:

<u>ມາດຕາ 1</u>: ປະກາດໃຊ້ກົດໝາຍ ວ່າດ້ວຍອຸດສະຫະກຳປຸງແຕ່ງ.
<u>ມາດຕາ 2</u>: ລັດຖະດຳລັດສະບັບນີ້ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 26 ເມສາ 1999.
ປະທານປະເທດແຫ່ງ ສ ປປ ລາວ
ຄຳໄຕ ສີພັນດອນ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

ສະພາແຫ່ງຊາດ

ເລກທີ 01/99/ສພຊ.
ວັນທີ 3/4/1999

# ກົດໝາຍ ວ່າດ້ວຍ ອຸດສາຫະກຳປຸງແຕ່ງ

## ພາກທີ I ບົດບັນຍັດທົ່ວໄປ

**ມາດຕາ 1. ໜ້າທີ່ຂອງກົດໝາຍ**

ກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງກຳນົດ ຫລັກການ, ລະບຽບການ ແລະ ມາດຕະການຕ່າງໆກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງກິດຈະການ ອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ແນໃສ່ ຂະຫຍາຍອຸດສາຫະກຳ ແລະ ຫັດຖະກຳ; ເອົາອຸດສາຫະກຳປຸງແຕ່ງຕິດພັນກັບການກະສິກຳ-ປ່າໄມ້; ຫັນເສດຖະກິດທຳມະຊາດຂອງຊາວກະສິກອນ ໄປສູ່ເສດຖະກິດສິນຄ້າ ເຮັດໃຫ້ໂຄງປະກອບເສດຖະກິດກະສິກຳ-ປ່າໄມ້, ອຸດສາຫະກຳ ແລະ ການບໍລິການ ຕິດພັນກັນ ເພື່ອຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃຫ້ດີຂຶ້ນ.

**ມາດຕາ 2. ອຸດສາຫະກຳປຸງແຕ່ງ**

ອຸດສາຫະກຳປຸງແຕ່ງ ແມ່ນອຸດສາຫະກຳ ແລະ ຫັດຖະກຳກ່ຽວກັບກິດຈະການໂຮງງານ ຊຶ່ງໝາຍເຖິງ ການປ່ຽນແປງ ວັດຖຸດິບ ຫລື ວັດຖຸເຄິ່ງສຳເລັດຮູບຈາກສະພາບເດີມ ໄປສູ່ຜະລິດຕະພັນໃໝ່ ດ້ວຍການນຳໃຊ້ເຄື່ອງຈັກ ຫລື ແຮງງານຄົນ ຢູ່ໃນໂຮງງານ ຫລື ສະຖານທີ່ອອກແຮງງານໃດໜຶ່ງກໍໄດ້ ຊຶ່ງຜະລິດຕະພັນເຫລົ່ານັ້ນສາມາດນຳເອົາໄປຈຳໜ່າຍເປັນສິນຄ້າໄດ້.

**ມາດຕາ 3. ການສົ່ງເສີມອຸດສາຫະກຳປຸງແຕ່ງ**

ລັດສົ່ງເສີມທຸກພາກສ່ວນເສດຖະກິດ ໃຫ້ລົງທຶນເຂົ້າໃສ່ອຸດສາຫະກຳແລະຫັດຖະກຳ ປຸງແຕ່ງເພື່ອຜະລິດສິນຄ້າໃຊ້ສອຍພາຍໃນປະເທດ, ທົດແທນສິນຄ້ານຳເຂົ້າ ແລະ ຜະລິດສິນຄ້າສົ່ງອອກ ໂດຍນຳໃຊ້ວັດຖຸດິບພາຍໃນປະເທດ ເປັນຕົ້ນ: ວັດຖຸດິບຈາກກະສິກຳ-ປ່າໄມ້.

**ມາດຕາ 4. ການປົກປັກຮັກສາສິ່ງແວດລ້ອມ**

ການດຳເນີນກິດຈະການອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ຕ້ອງຮັບປະກັນການປົກປັກຮັກສາສິ່ງແວດລ້ອມ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ.

### ມາດຕາ 5. ການປົກປ້ອງ ສິດຜົນປະໂຫຍດຂອງຜູ້ລົງທຶນ

ລັດປົກປ້ອງ ສິດຜົນປະໂຫຍດຂອງຜູ້ລົງທຶນ ດ້ານອຸດສາຫະກໍາ ແລະ ຫັດຖະກໍາປຸງແຕ່ງບົນພື້ນຖານ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ, ກົດໝາຍວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງ ການລົງທຶນ ຂອງຕ່າງປະເທດຢູ່ ສປປ ລາວ, ກົດໝາຍວ່າດ້ວຍທຸລະກິດ ແລະ ກົດໝາຍອື່ນໆ ທີ່ກ່ຽວຂ້ອງຂອງ ສປປ ລາວ.

### ມາດຕາ 6. ການຮ່ວມມືສາກົນ

ລັດເປີດກວ້າງ ແລະ ສົ່ງເສີມທຸກພາກສ່ວນເສດຖະກິດ ໃນການຮ່ວມມືກັບສາກົນ ເພື່ອຊຸກຍູ້ອຸດສາຫະກໍາ ແລະ ຫັດຖະກໍາ ປຸງແຕ່ງໃຫ້ຂະຫຍາຍຕົວ ແລະ ທັນເປັນທັນສະໄໝເທື່ອລະກ້າວ.

### ມາດຕາ 7. ຂອບເຂດການນໍາໃຊ້ກົດໝາຍ

ກົດໝາຍສະບັບນີ້ ນໍາໃຊ້ເພື່ອ ຄຸ້ມຄອງ, ກວດກາ ແລະ ສົ່ງເສີມການພັດທະນາ ກິດຈະການໂຮງງານອຸດສາຫະກໍາແລະຫັດຖະກໍາ ປຸງແຕ່ງ.

## ພາກທີ II ກິດຈະການໂຮງງານອຸດສາຫະກໍາ ແລະ ຫັດຖະກໍາ ປຸງແຕ່ງ

## ໝວດທີ 1 ກິດຈະການໂຮງງານ

### ມາດຕາ 8. ໂຮງງານອຸດສາຫະກໍາແລະຫັດຖະກໍາ ປຸງແຕ່ງ

ໂຮງງານອຸດສາຫະກໍາ ແລະ ຫັດຖະກໍາ ປຸງແຕ່ງ ປະກອບດ້ວຍ: ສະຖານທີ່, ອາຄານ ຫລື ພາຫະນະ ທີ່ບັນຈຸເຄື່ອງຈັກ ຊຶ່ງມີກໍາລັງແຮງລວມ ຫລື ກໍາລັງແຮງທຽບເທົ່າແຕ່ 5 ແຮງມ້າ ຫລື 3,73 ກິໂລວັດ ຂຶ້ນໄປ ຫລື ໃຊ້ຄົນງານແຕ່ 10 ຄົນຂຶ້ນໄປ ເພື່ອດໍາເນີນການຜະລິດ, ປະກອບ, ສ້ອມແປງ, ປັບປຸງ, ດັດແປງ, ບັນຈຸ ຫລື ການປຸງແຕ່ງຄືນໃໝ່ ໃນປະເພດໂຮງງານທີ່ໄດ້ກໍານົດໄວ້ໃນ ມາດຕາ 9 ຂອງກົດໝາຍສະບັບນີ້.

### ມາດຕາ 9. ປະເພດໂຮງງານ

ປະເພດໂຮງງານ ອຸດສາຫະກໍາ ແລະ ຫັດຖະກໍາປຸງແຕ່ງປະກອບມີຫລາຍກຸ່ມໂຮງງານຕາມລະດັບຄວາມສໍາຄັນດັ່ງນີ້:

1. ໂຮງງານ ປຸງແຕ່ງ ສະບຽງອາຫານ ແລະ ເຄື່ອງດື່ມ;
2. ໂຮງງານ ປຸງແຕ່ງ ໄມ້ ແລະ ຜະລິດຕະພັນທີ່ເຮັດຈາກໄມ້ ແລະ ຫວາຍ;
3. ໂຮງງານ ຜະລິດ ແຜ່ນແພ, ເສັ້ນດ້າຍ ແລະ ເສັ້ນໃຍ;
4. ໂຮງງານ ຜະລິດ ເຄື່ອງນຸ່ງຫົ່ມ;
5. ໂຮງງານ ຜະລິດ ເຈ້ຍ ແລະ ຜະລິດຕະພັນຈາກເຈ້ຍ;

6. ໂຮງງານ ພິມຈຳໜ່າຍ, ອຸປະກອນການສຶກສາ ແລະ ວາລະສານ;

7. ໂຮງງານ ຜະລິດເຄື່ອງຈັກໄຟຟ້າ ແລະ ອຸປະກອນໄຟຟ້າ;

8. ໂຮງງານ ປຸງແຕ່ງເຄມີ, ຜະລິດຕະພັນເຄມີ ແລະ ການຜະລິດຢາປົວພະຍາດ;

9. ໂຮງງານ ປຸງແຕ່ງຢາງ ແລະ ຜະລິດຕະພັນປລາສະຕິກ;

10. ໂຮງງານ ປຸງແຕ່ງແຮ່ທາດອະໂລຫະ;

11. ໂຮງງານ ປຸງແຕ່ງ ຜະລິດຕະພັນຢາສູບ;

12. ໂຮງງານ ປຸງແຕ່ງ ໜັງ ແລະ ຜະລິດຕະພັນຈາກໜັງ;

13. ໂຮງງານ ກ່ຽວກັບຖ່ານຫີນ ແລະ ເຊື້ອໄຟ;

14. ໂຮງງານ ປຸງແຕ່ງ ໂລຫະຂັ້ນຕົ້ນ

15. ໂຮງງານ ກ່ຽວກັບຜະລິດຕະພັນໂລຫະຍົກເວັ້ນເຄື່ອງຈັກ ແລະ ອຸປະກອນຮັບໃຊ້;

16.ໂຮງງານ ຜະລິດ ຫລື ປະກອບເຄື່ອງຈັກ ແລະ ອຸປະກອນຕ່າງໆ;

17. ໂຮງງານ ຜະລິດ ເຄື່ອງໃຊ້ຫ້ອງການ, ການບັນຊີ ແລະ ເຄື່ອງຈັກສະໝອງກົນ;

18. ໂຮງງານ ຜະລິດ ຫລື ປະກອບ ວິທະຍຸ, ໂທລະທັດ, ເຄື່ອງໃຊ້ໄຟຟ້າ, ເຄື່ອງອຸປະກອນການສື່ສານ ແລະ ເຄື່ອງມືຮັບໃຊ້;

19. ໂຮງງານ ຜະລິດ ຫລື ປະກອບອຸປະກອນການແພດ;

20. ໂຮງງານ ຜະລິດ ຫລື ປະກອບ ພາຫະນະຂົນສົ່ງທາງບົກ;

21. ໂຮງງານ ຜະລິດ ຫລື ປະກອບ ພາຫະນະຂົນສົ່ງອື່ນໆ;

22. ໂຮງງານ ຜະລິດ ເຟີນີເຈີ, ເຄື່ອງດົນຕີ, ເຄື່ອງກິລາ, ເຄື່ອງຫລິ້ນ;

23. ໂຮງງານ ກ່ຽວກັບການປຸງແຕ່ງຄືນໃໝ່.

### ມາດຕາ 10. ລະດັບໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ

ເພື່ອເປັນພື້ນຖານໃນການແບ່ງຂັ້ນຄຸ້ມຄອງ, ປະເພດໂຮງງານທີ່ໄດ້ກຳນົດໄວ້ໃນ ມາດຕາ 9 ຂອງກົດໝາຍສະບັບນີ້ ໄດ້ຈັດເປັນ 3 ລະດັບ ໂດຍອີງໃສ່ຂະໜາດຂອງກຳລັງແຮງລວມເຄື່ອງຈັກ, ຈຳນວນກຳມະກອນ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ ດັ່ງນີ້:

ໂຮງງານລະດັບທີ I: ໝາຍເຖິງປະເພດໂຮງງານຂະໜາດໃຫຍ່ ທີ່ມີຈຳນວນແຮງງານ ເກີນກວ່າ 200 ຄົນ ຫລື ກຳລັງແຮງ ຂອງເຄື່ອງຈັກ ເກີນກວ່າ 200 ແຮງມ້າ ຫລື ມີຜົນກະທົບຕໍ່ສິ່ງແວດລ້ອມສູງ.

ໂຮງງານລະດັບທີ II: ໝາຍເຖິງປະເພດໂຮງງານຂະໜາດກາງ ທີ່ມີຈຳນວນແຮງງານ ແຕ່ 51 ຫາ 200 ຄົນ ຫລື ກຳລັງແຮງຂອງເຄື່ອງຈັກແຕ່ 51 ຫາ 200 ແຮງມ້າ ຫລື ມີຜົນກະທົບຕໍ່ສິ່ງແວດລ້ອມ ປານກາງ.

ໂຮງງານລະດັບທີ III: ໝາຍເຖິງປະເພດໂຮງງານຂະໜາດນ້ອຍ ທີ່ມີຈຳນວນແຮງງານ ແຕ່ 10 ຫາ 50 ຄົນ ຫລື ກຳລັງແຮງຂອງເຄື່ອງຈັກ ແຕ່ 5 ຫາ 50 ແຮງມ້າ ຫລື ມີຜົນກະທົບຕໍ່ສິ່ງແວດລ້ອມຕ່ຳ.

ລະດັບຂອງໂຮງງານ ອາດຈະເລື່ອນຂຶ້ນ ຫລື ຫລຸດລົງ ຖ້າມີການປ່ຽນແປງປະເພດກິດຈະການການອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ຫລື ການປ່ຽນແປງທາງດ້ານຈຳນວນແຮງງານ ຫລື ກຳລັງແຮງຂອງເຄື່ອງຈັກ ຫລື ການປ່ຽນແປງຂອງຜົນກະທົບຕໍ່ສິ່ງແວດລ້ອມ.

### ມາດຕາ 11. ການດຳເນີນກິດຈະການໂຮງງານອຸດສາຫະກຳແລະຫັດຖະກຳ ປຸງແຕ່ງ

ການດຳເນີນກິດຈະການໂຮງງານ ຕ້ອງປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ ແລະ ຕ້ອງ ມີໃບອະນຸຍາດດຳເນີນກິດຈະການໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ຕາມລະບຽບການ ຈາກຂະແໜງອຸດສາຫະກຳ ແລະ ຫັດຖະກຳ.

ໃບອະນຸຍາດດຳເນີນກິດຈະການ ໂຮງງານມີອາຍຸແຕ່ 3 ຫາ 5 ປີ ໂດຍອີງໃສ່ປະເພດ ແລະ ຂະໜາດຂອງໂຮງງານ ແລະ ສາມາດຕໍ່ໄດ້

## ໝວດທີ 2 ການຄຸ້ມຄອງເຄື່ອງຈັກ.

### ມາດຕາ 12. ການຂຶ້ນບັນຊີ ແລະ ການຄິດໄລ່ແຮງມ້າປຽບທຽບເຄື່ອງຈັກ

ເຄື່ອງຈັກ ໝາຍເຖິງ ພາຫະນະການຜະລິດ ຊຶ່ງປະກອບດ້ວຍຫລາຍກົນໄກທີ່ນຳໃຊ້ພະລັງງານ ຕ່າງໆເຊັ່ນ: ໄຟຟ້າ, ນ້ຳມັນເຊື້ອໄຟ, ອາຍແກັສ, ອາຍນ້ຳ, ພະລັງແສງອາທິດ ຫລື ພະລັງງານອື່ນໆ.

ເຄື່ອງຈັກທີ່ນຳເຂົ້າ, ຜະລິດຢູ່ພາຍໃນປະເທດ ແລະ ກຳລັງນຳໃຊ້ ຢູ່ໃນໂຮງງານ ຕ້ອງຂຶ້ນບັນຊີຄິດໄລ່ແຮງມ້າປຽບທຽບ ແລະ ສາມາດຂຶ້ນທະບຽນຢັ້ງຢືນກຳມະສິດ ຈາກຂະແໜງອຸດສາຫະກຳ ແລະ ຫັດຖະກຳ.

### ມາດຕາ 13. ການຍົກຍ້າຍເຄື່ອງຈັກ

ການຍົກຍ້າຍເຄື່ອງຈັກ ຈາກສະຖານທີ່ເດີມ ໄປສະຖານທີ່ອື່ນ ຕ້ອງໄດ້ຮັບຄຳເຫັນດີຈາກຂະແໜງອຸດສາຫະກຳ ແລະ ຫັດຖະກຳ.

## ໝວດທີ 3 ເງື່ອນໄຂການດຳເນີນກິດຈະການໂຮງງານ

### ມາດຕາ 14. ເງື່ອນໄຂການດຳເນີນກິດຈະການໂຮງງານ

ໂຮງງານທີ່ໄດ້ຮັບອະນຸຍາດ ໃຫ້ດຳເນີນກິດຈະການແລ້ວ ຕ້ອງດຳເນີນການຜະລິດຕາມເປົ້າຫມາຍ, ຮັບປະກັນຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ, ປະຕິບັດລະບຽບການຕ່າງໆກ່ຽວກັບ ຄວາມປອດໄພ, ສຸຂານາໄມ ແລະ ສິ່ງແວດລ້ອມໂຮງງານ.

**ມາດຕາ 15. ການຈົດທະບຽນຄຸນນະພາບ ແລະມາດຕະຖານຜະລິດຕະພັນ**

ຜູ້ດຳເນີນກິດຈະການໂຮງງານ ສາມາດເອົາຜະລິດຕະພັນຂອງຕົນ ໄປຈົດທະບຽນຄຸນນະພາບ ແລະ ມາດຕະຖານຜະລິດຕະພັນ ຕາມລະບຽບການຂອງ ຂະແໜງອຸດສາຫະກຳ ແລະ ຫັດຖະກຳ ແລະ ຂອງຂະແໜງການອື່ນທີ່ກ່ຽວຂ້ອງ.

## ໝວດທີ 4 ສາຍພົວພັນລະຫວ່າງໂຮງງານ ກັບ ແຫລ່ງວັດຖຸດິບ

**ມາດຕາ 16. ສາຍພົວພັນລະຫວ່າງໂຮງງານກັບແຫລ່ງວັດຖຸດິບ**

ການຕັ້ງໂຮງງານອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ຕ້ອງອີງໃສ່ ແຫລ່ງວັດຖຸດິບ ກະສິກຳ-ປ່າໄມ້ ແລະ ແຮ່ທາດ ພາຍໃນປະເທດເປັນຕົ້ນຕໍ.

**ມາດຕາ 17. ນະໂຍບາຍຊຸກຍູ້ການຜະລິດວັດຖຸດິບ**

ຂະແໜງອຸດສາຫະກຳແລະຫັດຖະກຳ ແລະ ຂະແໜງກະສິກຳ-ປ່າໄມ້ຮ່ວມກັນວາງນະໂຍບາຍ ສົ່ງເສີມ ແລະ ວາງແຜນຊຸກຍູ້ ການປູກຝັງ, ລ້ຽງສັດຂອງຄອບຄົວເອກະເທດ, ສະຫະກອນຮ່ວມມື ແລະ ພາກສ່ວນເສດຖະກິດອື່ນໆ ເພື່ອສະໜອງວັດຖຸດິບໃຫ້ໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງຕາມຄວາມຕ້ອງການ.

ຂະແໜງອຸດສາຫະກຳ ແລະ ຫັດຖະກຳຕ້ອງມີແຜນການປະສານສົມທົບ ແລະ ຊຸກຍູ້ພາກສ່ວນທີ່ໄດ້ ຮັບອະນຸຍາດໃຫ້ທຳການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດຂັ້ນຕົ້ນ ເພື່ອຮັບປະກັນໃຫ້ມີວັດຖຸດິບປ້ອນໂຮງງານ ອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ຕາມຄວາມຕ້ອງການ.

## ໝວດທີ 5 ການປົກປັກຮັກສາສິ່ງແວດລ້ອມ

**ມາດຕາ 18. ການປົກປັກຮັກສາສິ່ງແວດລ້ອມ**

ການດຳເນີນກິດຈະການໂຮງງານ ຕ້ອງປະຕິບັດຕາມກົດໝາຍ ວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ, ກົດໝາຍວ່າດ້ວຍຜັງເມືອງ ແລະ ລະບຽບການທີ່ກະຊວງອຸດສາຫະກຳ ແລະ ຫັດຖະກຳ ວາງອອກ.

**ມາດຕາ 19. ເຂດກຳຈັດສິ່ງເສດເຫລືອ ຂອງໂຮງງານ**

ສິ່ງເສດເຫລືອທຸກປະເພດ ແລະ ນ້ຳເປື້ອນຂອງໂຮງງານ ຕ້ອງກຳຈັດ ແລະ ບຳບັດ ຕາມວິທີການ ແລະ ສະຖານທີ່ ທີ່ກຳນົດໃຫ້ ຕາມລະບຽບການ.

**ມາດຕາ 20. ມາດຕະການປົກປັກຮັກສາສິ່ງແວດລ້ອມ**

ການຕັ້ງ ແລະ ການດຳເນີນກິດຈະການໂຮງງານ ຕ້ອງຫລີກລ້ຽງ ຫລື ຫລຸດຜ່ອນຜົນກະທົບຈາກການສັ່ນຈອນ, ສຽງ, ແສງ, ສີ, ກິ່ນ, ອາຍພິດ, ຝຸ່ນ, ຄວັນ, ຄວາມສັ່ນສະເທືອນ, ອຸນນະພູມ,

ຄວາມຊຸ່ມ ແລະ ອື່ນໆ ຕໍ່ສິ່ງແວດລ້ອມສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ ລວມທັງການຂົນສົ່ງ, ການເກັບຮັກສາ ແລະ ການນຳໃຊ້ສານເຄມີທີ່ເປັນພິດ ຂອງໂຮງງານ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍ ການປົກປັກຮັກສາສິ່ງແວດລ້ອມ ແລະ ລະບຽບການທີ່ກະຊວງອຸດສາຫະກຳ ແລະ ຫັດຖະກຳ ວາງອອກ.

## ໝວດທີ 6 ການຂະຫຍາຍ, ການຍົກຍ້າຍ ແລະ ການໂອນ ກິດຈະການໂຮງງານ

### ມາດຕາ 21. ການຂະຫຍາຍ ໂຮງງານ

ການຂະຫຍາຍໂຮງງານ ແມ່ນ ການເພີ່ມຈຳນວນ, ປ່ຽນ ຫລື ດັດແປງເຄື່ອງຈັກ ຫລື ການເພີ່ມເນື້ອທີ່ອາຄານໂຮງງານ ຫລື ທັງສອງຢ່າງພ້ອມກັນ.

ການຂະຫຍາຍໂຮງງານ ຕ້ອງໄດ້ຮັບອະນຸຍາດດຳເນີນກິດຈະການໃນສ່ວນທີ່ຂະຫຍາຍຕາມລະບຽບການຂອງຂະແໜງອຸດສາຫະກຳແລະຫັດຖະກຳ. ສຳລັບການປ່ຽນແປງເລັກນ້ອຍ ແມ່ນໃຫ້ແຈ້ງຕໍ່ຂະແໜງອຸດສາຫະກຳ ແລະ ຫັດຖະກຳ ຊາບລ່ວງໜ້າ.

### ມາດຕາ 22. ການຍົກຍ້າຍ ໂຮງງານ

ການຍົກຍ້າຍໂຮງງານໄປແຫ່ງອື່ນ ຕ້ອງໄດ້ຮັບອະນຸຍາດຕາມລະບຽບການ ຂອງຂະແໜງອຸດສາຫະກຳ ແລະ ຫັດຖະກຳ, ກົດໝາຍວ່າດ້ວຍຜັງເມືອງ ແລະ ລະບຽບການຂອງຂະແໜງການອື່ນໆທີ່ກ່ຽວຂ້ອງ.

### ມາດຕາ 23. ການໃຫ້ເຊົ່າ, ການໂອນ ກິດຈະການໂຮງງານ

ກິດຈະການໂຮງງານ ສາມາດໃຫ້ເຊົ່າ ຫລື ໂອນໃຫ້ບຸກຄົນ ຫລື ນິຕິບຸກຄົນດ້ວຍການມອບກຳມະສິດ, ການສືບທອດ, ການຊື້ ຂາຍ ກໍໄດ້.

ຜູ້ໄດ້ຮັບມອບ, ສືບທອດ ຫລື ຊື້ ກິດຈະການໂຮງງານ ໄດ້ຮັບສິດ ແລະ ພັນທະຕາມກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ໝວດທີ 7 ພື້ນທີ່, ເຂດ, ນິຄົມ ແລະ ສະຖາບັນ ຫລື ສູນຄົ້ນຄ້ວາທົດລອງອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ

### ມາດຕາ 24. ພື້ນທີ່ອຸດສາຫະກຳ

ພື້ນທີ່ອຸດສາຫະກຳ ແມ່ນເນື້ອທີ່ດິນ ທີ່ໄດ້ຮັບອະນຸຍາດໃຫ້ຕັ້ງໂຮງງານ ຊຶ່ງຢູ່ນອກເຂດຈັດສັນ ຫລື ນິຄົມອຸດສາຫະກຳ.

### ມາດຕາ 25. ເຂດອຸດສາຫະກຳ

ເຂດອຸດສາຫະກຳ ແມ່ນເນື້ອທີ່ດິນ ທີ່ລັດສະຫງວນໄວ້ສຳລັບການຕັ້ງໂຮງງານອຸດສາຫະກຳ ແລະ ຫັດຖະກຳ ຊຶ່ງໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍຜັງເມືອງ.

### ມາດຕາ 26. ນິຄົມອຸດສາຫະກຳ

ນິຄົມອຸດສາຫະກຳ ແມ່ນເນື້ອທີ່ດິນ ໃນເຂດອຸດສາຫະກຳ ຊຶ່ງໄດ້ກໍ່ສ້າງໂຄງລ່າງພື້ນຖານແລ້ວ ເຊັ່ນ: ຖະໜົນ, ໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມ, ອາຄານ ແລະ ອື່ນໆ ທີ່ຈຳເປັນສຳລັບກິດຈະການໂຮງງານ ເພື່ອໃຫ້ນັກທຸລະກິດເຊົ່າ ຫລື ສຳປະທານ.

### ມາດຕາ 27. ສະຖາບັນ ຫລື ສູນຄົ້ນຄ້ວາ ທົດລອງອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ

ໃນການພັດທະນາ ແລະ ສົ່ງເສີມອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງນັ້ນ, ລັດສົ່ງເສີມໃຫ້ບຸກຄົນ ແລະ ການຈັດຕັ້ງ ລົງທຶນສ້າງສະຖາບັນ ຫລື ສູນຄົ້ນຄ້ວາ ທົດລອງ ທາງດ້ານວິຊາການເປັນຕົ້ນ ດ້ານວຽກງານການເພີ່ມຜົນຜະລິດ, ການພັດທະນາອຸດສາຫະກຳສະເພາະ, ການສົ່ງເສີມຫັດຖະກຳ, ການສົ່ງເສີມອຸດສາຫະກຳແບບຄອບຄົວ, ມາດຕະຖານອຸດສາຫະກຳ, ສິ່ງແວດລ້ອມອຸດສາຫະກຳ ແລະ ການບໍລິການອຸດສາຫະກຳ ອື່ນ ໆ.

## ພາກທີ III ການລົງທຶນ ແລະ ການສົ່ງເສີມ ອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ

## ໝວດທີ 1 ການລົງທຶນ

### ມາດຕາ 28. ການສົ່ງເສີມການລົງທຶນໃສ່ອຸດສາຫະກຳແລະຫັດຖະກຳ ປຸງແຕ່ງ

ລັດສົ່ງເສີມໃຫ້ນັກລົງທຶນພາຍໃນ ແລະ ຕ່າງປະເທດລົງທຶນໃສ່ກິດຈະການອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງທີ່ນຳໃຊ້ວັດຖຸດິບພາຍໃນ ເຊັ່ນ: ວັດຖຸດິບຈາກກະສິກຳ-ປ່າໄມ້ ແລະ ແຮ່ທາດ, ເພື່ອປຸງແຕ່ງເປັນສິນຄ້າຮັບໃຊ້ພາຍໃນ ແລະ ສົ່ງອອກ. ສຳລັບວັດຖຸດິບທີ່ມີຄວາມຈຳເປັນນຳເຂົ້າຈາກຕ່າງປະເທດມາຮັບໃຊ້ໃຫ້ແກ່ໂຮງງານໃນເຂດທີ່ໄດ້ກຳນົດໄວ້ນັ້ນແມ່ນເລັ່ງໃສ່ເພື່ອປຸງແຕ່ງເປັນສິນຄ້າສົ່ງອອກເປັນຈຸດໜັກ.

### ມາດຕາ 29. ຮູບການລົງທຶນ

ຮູບການລົງທຶນໃສ່ອຸດສາຫະກຳແລະຫັດຖະກຳ ປຸງແຕ່ງ ປະກອບດ້ວຍ:

1. ການລົງທຶນຂອງຫົວໜ່ວຍຄອບຄົວ;
2. ການລົງທຶນແບບຮ່ວມມືຂອງປະຊາຊົນ;
3. ລັດວິສາຫະກິດ ລົງທຶນແຕ່ພຽງຜູ້ດຽວ;
4. ລັດວິສາຫະກິດ ລົງທຶນຮ່ວມກັບເອກະຊົນພາຍໃນ ຫລື ຕ່າງປະເທດ;
5. ການລົງທຶນຂອງເອກະຊົນພາຍໃນ;

6. ການລົງທຶນຂອງເອກະຊົນພາຍໃນກັບຕ່າງປະເທດ;

7. ການລົງທຶນຂອງຕ່າງປະເທດແຕ່ພຽງຜູ້ດຽວ.

## ໝວດທີ 2 ການສົ່ງເສີມ ອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ

### ມາດຕາ 30. ເນື້ອໃນການສົ່ງເສີມ

ເພື່ອຮັບປະກັນ ໃຫ້ແກ່ການຜະລິດອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ມີປະສິດທິຜົນສູງນັ້ນ ການສົ່ງເສີມຕ້ອງດຳເນີນຢ່າງຄົບຊຸດ ຄື:

1. ທຶນ ແລະ ກອງທຶນສົ່ງເສີມ;
2. ເຕັກໂນໂລຊີ ແລະ ເຄື່ອງຈັກ;
3. ວິຊາການ;
4. ການຝຶກອົບຮົມວິຊາຊີບ;
5. ການສະໜອງຂໍ້ມູນ ແລະ ຂ່າວສານ;
6. ການອຳນວຍຄວາມສະດວກ;
7. ການໃຫ້ບຸລິມະສິດ;
8. ນະໂຍບາຍ ພາສີແລະອາກອນ;
9. ການປົກປ້ອງຜະລິດຕະພັນພາຍໃນ;
10. ການຕະຫລາດ.

### ມາດຕາ 31. ທຶນ ແລະ ກອງທຶນສົ່ງເສີມ

ລັດສົ່ງເສີມ ດ້ວຍການສ້າງເງື່ອນໄຂຊຸກຍູ້ໃຫ້ທຸກພາກສ່ວນເສດຖະກິດ, ທະນາຄານ ແລະ ສະຖາບັນການເງິນອື່ນໆ ປະກອບທຶນ, ສ້າງກອງທຶນ ແລະ ໃຫ້ສິນເຊື່ອ ແກ່ບຸກຄົນ ຫລື ການຈັດຕັ້ງທີ່ມີຈຸດປະສົງລົງທຶນເຂົ້າໃນກິດຈະການອຸດສາຫະກຳແລະຫັດຖະກຳ ປຸງແຕ່ງ.

### ມາດຕາ 32. ເຕັກໂນໂລຊີ ແລະ ເຄື່ອງຈັກ

ລັດສົ່ງເສີມໃຫ້ນຳໃຊ້ເຕັກໂນໂລຊີ ແລະ ເຄື່ອງຈັກ ທີ່ກ້າວໜ້າ ແລະ ເໝາະສົມເຂົ້າໃນຂະບວນການຜະລິດອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ເພື່ອຮັບປະກັນໃຫ້ການຜະລິດມີປະສິດທິຜົນ ແລະ ຫລີກລ້ຽງ ຫລື ຫລຸດຜ່ອນຜົນກະທົບ ຕໍ່ສິ່ງແວດລ້ອມ.

### ມາດຕາ 33. ວິຊາການ

ເພື່ອໃຫ້ກິດຈະການອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ດຳເນີນໄປຢ່າງມີປະສິດທິຜົນ, ລັດຊຸກຍູ້ ສົ່ງເສີມທຸກພາກສ່ວນເອົາໃຈໃສ່ ໃນການບຳລຸງຍົກລະດັບ ທາງດ້ານວິຊາການດ້ວຍຫລາຍຮູບການ ທັງຢູ່ພາຍໃນ ແລະ ຕ່າງປະເທດ ໃຫ້ແກ່ພະນັກງານວິຊາການ, ນັກບໍລິຫານທຸລະກິດ ແລະ ກຳມະກອນ.

### ມາດຕາ 34. ການຝຶກອົບຮົມວິຊາຊີບ

ລັດສົ່ງເສີມໃຫ້ບຸກຄົນ ແລະ ການຈັດຕັ້ງ ເອົາໃຈໃສ່ຝຶກອົບຮົມປະຊາຊົນບັນດາເຜົ່າ ກ່ຽວກັບວິຊາຊີບອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ລວມທັງວິທີການເກັບຮັກສາວັດຖຸດິບ, ປຸງແຕ່ງຜະລິດຕະພັນກະສິກຳ ແລະ ອື່ນໆ ເພື່ອເປັນສິນຄ້າ ແລະ ສະໜອງວັດຖຸດິບປ້ອນໂຮງງານ.

### ມາດຕາ 35. ຂໍ້ມູນຂ່າວສານ

ລັດສົ່ງເສີມໃຫ້ບຸກຄົນ ແລະ ການຈັດຕັ້ງ ເກັບກຳ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບກິດຈະການອຸດສາຫະກຳແລະຫັດຖະກຳ ປຸງແຕ່ງ ຈາກພາຍໃນ ແລະ ຕ່າງປະເທດເຊັ່ນ: ຂໍ້ມູນຂ່າວສານທາງດ້ານ ສິນຄ້າ, ການຕະຫລາດ, ລາຄາ, ເຕັກໂນໂລຊີ, ແຫລ່ງທຶນ ແລະ ອື່ນໆ ເພື່ອສ້າງລະບົບຂໍ້ມູນຂ່າວສານຢ່າງກວ້າງຂວາງ.

### ມາດຕາ 36. ການອຳນວຍຄວາມສະດວກ

ລັດອຳນວຍຄວາມສະດວກຕ່າງໆ ໃຫ້ແກ່ຜູ້ລົງທຶນເຂົ້າໃນອຸດສາຫະກຳ ແລະ ຫັດຖະກຳ ປຸງແຕ່ງ ເປັນຕົ້ນ: ດ້ານລະບຽບການ ໃຫ້ມີລັກສະນະຄ່ອງຕົວ ແລະ ກະຕຸກຊຸກຍູ້.

ການອອກໃບອະນຸຍາດ ດຳເນີນກິດຈະການໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ຕ້ອງສຳເລັດພາຍໃນ 30 ວັນ ນັບແຕ່ມື້ໄດ້ຮັບຄຳຮ້ອງຂໍດຳເນີນກິດຈະການໂຮງງານ ຄົບຖ້ວນ, ຖືກຕ້ອງ ແລະ ໂຮງງານຕ້ອງໄດ້ມາດຕະຖານເຕັກນິກ ຕາມລະບຽບການຂອງຂະແໜງອຸດສາຫະກຳ ແລະ ຫັດຖະກຳ.

### ມາດຕາ 37. ການໃຫ້ບູລິມະສິດ

ລັດໃຫ້ບູລິມະສິດ ແກ່ການລົງທຶນໃສ່ກິດຈະການອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ຕາມລະດັບຄວາມສຳຄັນ ຂອງປະເພດໂຮງງານທີ່ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້ ແລະ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ດັ່ງຕໍ່ໄປນີ້:

1. ຜະລິດສິນຄ້າສົ່ງອອກ ຫລື ທົດແທນສິນຄ້ານຳເຂົ້າ ທີ່ນຳໃຊ້ວັດຖຸດິບພາຍໃນ;
2. ດຳເນີນກິດຈະການໂຮງງານ ຢູ່ເຂດຈຸດສຸມ, ເຂດຊົນນະບົດ, ເຂດພູດອຍ, ເຂດຫ່າງໄກສອກຫລີກ ແລະ ເຂດບູລິມະສິດອື່ນໆທີ່ລັດຖະບານກຳນົດໄວ້;
3. ລົງທຶນຂະໜາດໃຫຍ່ ນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ຊຶ່ງມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 38. ນະໂຍບາຍ ພາສີແລະອາກອນ

ລັດວາງນະໂຍບາຍພາສີ ແລະ ອາກອນທີ່ມີລັກສະນະກະຕຸກຊຸກຍູ້ກິດຈະການ ອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ເປັນຕົ້ນກິດຈະການທີ່ໄດ້ຮັບບູລິມະສິດຈາກລັດຖະບານ.

ການນຳເຂົ້າເຄື່ອງຈັກ ແລະ ອຸປະກອນ ສຳລັບການຕັ້ງ ແລະ ດຳເນີນກິດຈະການໂຮງງານ, ການຈໍລະຈອນຜະລິດຕະພັນອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງຢູ່ພາຍໃນປະເທດ ແລະ ສົ່ງອອກ ຈະໄດ້ຮັບການຍົກເວັ້ນ ຫລື ຫລຸດຜ່ອນອັດຕາພາສີ ແລະ ອາກອນ.

### ມາດຕາ 39. ການປົກປ້ອງຜະລິດຕະພັນພາຍໃນ

ລັດເອົາໃຈໃສ່ປົກປ້ອງ ຜະລິດຕະພັນພາຍໃນປະເທດໃນໄລຍະເວລາໃດໜຶ່ງ ດ້ວຍການນຳໃຊ້ມາດຕະການຕ່າງໆ ເຊັ່ນ: ສິນເຊື່ອ, ພາສີ, ອາກອນ, ການຄວບຄຸມການນຳເຂົ້າສິນຄ້າຊະນິດດຽວກັນ ທີ່ສາມາດຜະລິດໄດ້ພາຍໃນປະເທດ.

### ມາດຕາ 40. ການຕະຫລາດ

ລັດຊຸກຍູ້ ແລະ ສົ່ງເສີມ ໃຫ້ທຸກພາກສ່ວນເສດຖະກິດ ຊອກຕະຫລາດພາຍໃນ ແລະ ຕ່າງປະເທດ ໃຫ້ແກ່ການຈຳໜ່າຍຜະລິດຕະພັນອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ດ້ວຍຮູບການຕ່າງໆ ເຊັ່ນ: ໂຄສະນາ, ເປີດງານວາງສະແດງສິນຄ້າ, ເປີດກວ້າງການພົວພັນການຄ້າສາກົນ, ພັດທະນາຜະລິດຕະພັນໃຫ້ສອດຄ່ອງກັບຕະຫລາດ, ປຸກລະດົມປະຊາຊົນບັນດາເຜົ່າໃຫ້ຊົມໃຊ້ຜະລິດຕະພັນພາຍໃນປະເທດ ແລະ ອື່ນໆ.

## ພາກທີ IV ສິດ ແລະ ພັນທະຂອງຜູ້ດຳເນີນກິດຈະການໂຮງງານ ອຸດສາຫະກຳແລະຫັດຖະກຳ ປຸງແຕ່ງ

### ມາດຕາ 41. ສິດ ຂອງຜູ້ດຳເນີນກິດຈະການໂຮງງານ

ຜູ້ດຳເນີນກິດຈະການໂຮງງານ ມີສິດດັ່ງນີ້ :

1. ໄດ້ຮັບການປົກປ້ອງຕາມກົດໝາຍ;
2. ດຳເນີນກິດຈະການໂຮງງານ ຕາມຂອບເຂດທີ່ໄດ້ຮັບອະນຸຍາດ;
3. ເປັນເຈົ້າກຳມະສິດຂອງກິດຈະການໂຮງງານ ແລະ ໝາກຜົນທີ່ໄດ້ຮັບຈາກການດຳເນີນກິດຈະການດັ່ງກ່າວ;
4. ໄດ້ຮັບການສົ່ງເສີມ, ການຊ່ວຍເຫລືອ, ແນະນຳຈາກລັດ ແລະ ພາກສ່ວນອື່ນໆ ທາງດ້ານວິ ຊາການ ແລະ ເຕັກໂນໂລຊີ ກ່ຽວກັບການດຳເນີນກິດຈະການໂຮງງານ;
5. ມີສິດຂໍຕໍ່ອາຍຸໃບອະນຸຍາດດຳເນີນກິດຈະການໂຮງງານ ຕາມລະບຽບການ;
6. ກໍ່ສ້າງສິ່ງປຸກສ້າງ ແລະ ຕິດຕັ້ງເຄື່ອງຈັກ, ອຸປະກອນຕ່າງໆ ໃຫ້ແກ່ການດຳເນີນກິດຈະການ ໂຮງງານ ຕາມລະບຽບການຂອງຂະແໜງການທີ່ກ່ຽວຂ້ອງ;
7. ໃຫ້ເຊົ່າ, ໂອນ, ມອບ, ສືບທອດ, ຊື້ຂາຍ ກິດຈະການໂຮງງານ ຕາມລະບຽບການ.

### ມາດຕາ 42. ພັນທະ ຂອງຜູ້ດຳເນີນກິດຈະການໂຮງງານ

ຜູ້ດຳເນີນກິດຈະການໂຮງງານ ມີພັນທະດັ່ງນີ້ :

1. ປະຕິບັດຕາມແຜນການ ແລະ ບົດວິພາກເສດຖະກິດເຕັກນິກກ່ຽວກັບການຕັ້ງ ແລະ ດໍາເນີນກິດຈະການໂຮງງານ;

2. ປົກປັກຮັກສາສິ່ງແວດລ້ອມຕາມລະບຽບການທີ່ກໍານົດໄວ້;

3. ຖືບັນຊີວິສາຫະກິດຖືກຕ້ອງຕາມລະບຽບການ;

4. ປະຕິບັດພັນທະພາສີ ແລະ ອາກອນ, ພັນທະດ້ານແຮງງານ ແລະ ອື່ນໆ ກ່ຽວກັບການດໍາເນີນກິດຈະການໂຮງງານໃຫ້ຖືກຕ້ອງ, ຄົບຖ້ວນ ແລະ ທັນຕາມກໍານົດເວລາ;

5. ລາຍງານຜົນຂອງການດໍາເນີນກິດຈະການໂຮງງານຕາມກໍານົດເວລາ;

6. ຝຶກອົບຮົມ ແລະ ກໍ່ສ້າງພະນັກງານວິຊາສະເພາະໃຫ້ແກ່ຄົນລາວ ລວມທັງຮັບປະກັນການເບີກຈ່າຍເງິນເດືອນ, ສະຫວັດດີການ, ສຸຂະພາບ ແລະ ຄວາມປອດໄພຂອງຄົນງານ;

7. ເອົາໃຈໃສ່ນໍາໃຊ້ແຮງງານຢູ່ທ້ອງຖິ່ນ ບ່ອນໂຮງງານຕັ້ງຢູ່ ຫລື ທ້ອງຖິ່ນອື່ນ ຖ້າມີຄວາມຈໍາເປັນ;

8. ພົວພັນກັບອໍານາດການປົກຄອງທ້ອງຖິ່ນ ບ່ອນທີ່ຕົນເຄື່ອນໄຫວ ເພື່ອຈະໄດ້ຮັບການຊ່ວຍເຫລືອ ແລະ ຄວາມສະດວກອື່ນໆ ກ່ຽວກັບການດໍາເນີນກິດຈະການໂຮງງານ, ແລະ ເຂົ້າຮ່ວມໃນການພັດທະນາເສດຖະກິດ-ສັງຄົມຂອງທ້ອງຖິ່ນ ພ້ອມທັງປົກປັກຮັກສາຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍ;

9. ຊຸກຍູ້ການຜະລິດ ແລະ ນໍາໃຊ້ ວັດຖຸດິບ ຂອງປະຊາຊົນບັນດາເຜົ່າ ດ້ວຍການຜູກພັນສອງສົ້ນ ຫລື ດ້ວຍຮູບການອື່ນ ແລະ ວາງແຜນຍຸດທະສາດການຕະຫລາດ ເພື່ອຮອງຮັບການຈໍລະຈອນຜະລິດຕະພັນໄດ້ຢ່າງຄ່ອງຕົວ ທັງຮັບປະກັນ ການຜະລິດສໍາເປີດກວ້າງ;

10. ອໍານວຍຄວາມສະດວກໃຫ້ແກ່ອົງການຈັດຕັ້ງມະຫາຊົນ ໄດ້ເຄື່ອນໄຫວປະກອບສ່ວນຊຸກຍູ້ໃຫ້ໂຮງງານດໍາເນີນກິດຈະການຢ່າງມີປະສິດທິຜົນ.

## ພາກທີ V ອົງການຄຸ້ມຄອງ ແລະ ກວດກາ

### ໝວດທີ 1 ອົງການຄຸ້ມຄອງ

**ມາດຕາ 43. ອົງການຄຸ້ມຄອງ**

ອົງການຄຸ້ມຄອງ ການດໍາເນີນກິດຈະການໂຮງງານ ປະກອບດ້ວຍ:

1. ຂະແໜງອຸດສາຫະກໍາ ແລະ ຫັດຖະກໍາ;
2. ບັນດາຂະແໜງການທີ່ກ່ຽວຂ້ອງ;
3. ອໍານາດການປົກຄອງທ້ອງຖິ່ນ.

**ມາດຕາ 44. ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກໍາ ແລະ ຫັດຖະກໍາ**

ກະຊວງອຸດສາຫະກໍາ ແລະ ຫັດຖະກໍາ ເປັນເສນາທິການໃຫ້ແກ່ລັດຖະບານ ດັ່ງນີ້:

1.ຮ່າງ ແລະ ຜັນຂະຫຍາຍແຜນຍຸດທະສາດ ກ່ຽວກັບອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ ໃຫ້ກາຍເປັນແຜນການ, ໂຄງການລະອຽດ ແລະ ລະບຽບການ;

2. ສຳຫລວດເກັບກຳຂໍ້ມູນສະຖິຕິ ກ່ຽວກັບເງື່ອນໄຂ, ທ່າແຮງຂອງແຕ່ລະເຂດ ເພື່ອສົ່ງເສີມ, ພັດທະນາກິດຈະການອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງໃນຂອບເຂດທົ່ວປະເທດໂດຍ ເຜີຍແຜ່ຂໍ້ມູນຂ່າວສານ, ບັນດາຕົວແບບ ໂດຍປະສານສົມທົບກັບພາກສ່ວນອື່ນໆ ແລະ ອຳນາດການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

3. ສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການສ້າງ, ບຳລຸງ ແລະ ຍົກລະດັບວິຊາການໃຫ້ແກ່ພະນັກງານ ແລະ ກຳມະກອນ;

4. ຄົ້ນຄ້ວາ ແລະ ມີຄຳເຫັນດ້ານວິຊາການ ກ່ຽວກັບການຂໍອະນຸຍາດລົງທຶນໃສ່ກິດຈະການອຸດ ສາຫະກຳ ແລະ ຫັດຖະກຳປຸງແຕ່ງ;

5. ອອກໃບອະນຸຍາດ ດຳເນີນກິດຈະການໂຮງງານ ອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງທຸກປະເພດ ທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍສະບັບນີ້;

6.ສ້າງແຜນແມ່ບົດ ກ່ຽວກັບການພັດທະນາອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ;

7. ພົວພັນຮ່ວມມືກັບສາກົນ ເພື່ອພັດທະນາ ແລະ ສົ່ງເສີມອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງ.

### ມາດຕາ 45. ສິດ ແລະ ໜ້າທີ່ຂອງພະແນກອຸດສາຫະກຳ ແລະ ຫັດຖະກຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ

ພະແນກອຸດສາຫະກຳ ແລະ ຫັດຖະກຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ ມີສິດ ແລະ ໜ້າທີ່ໃນການຄຸ້ມຄອງກິດຈະການ ໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງບົນພື້ນຖານການແບ່ງຂັ້ນຄຸ້ມຄອງ ແລະ ຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະ ຫັດຖະກຳ.

### ມາດຕາ 46. ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ຫັດຖະກຳເມືອງ

ຫ້ອງການອຸດສາຫະກຳ ແລະ ຫັດຖະກຳເມືອງ ມີສິດ ແລະ ໜ້າທີ່ ໃນການຄຸ້ມຄອງກິດຈະການໂຮງງານອຸດສາຫະກຳ ແລະ ຫັດຖະກຳປຸງແຕ່ງບົນພື້ນຖານການແບ່ງຂັ້ນຄຸ້ມຄອງ ແລະ ຕາມການມອບໝາຍຂອງພະແນກອຸດສາຫະກຳ ແລະ ຫັດຖະກຳແຂວງ, ກຳແພງນະຄອນ ແລະ ເຂດພິເສດ.

### ມາດຕາ 47. ສິດ ແລະ ໜ້າທີ່ຂອງອຳນາດການປົກຄອງບ້ານ

ອຳນາດການປົກຄອງບ້ານ ມີສິດ ແລະ ໜ້າທີ່ປະສານສົມທົບກັບໂຮງງານກ່ຽວກັບການປົກປັກຮັກສາ ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ສິ່ງແວດລ້ອມໃນຂອບເຂດຂອງບ້ານຮັບຜິດຊອບ, ອຳນວຍຄວາມສະດວກໃນການເຄື່ອນໄຫວວຽກງານ ທີ່ພົວພັນເຖິງກິດຈະການຂອງໂຮງງານ.

## ໝວດທີ 2 ອົງການກວດກາ

### ມາດຕາ 48. ອົງການກວດກາ

ອົງການທີ່ໄດ້ກໍານົດໄວ້ໃນມາດຕາ 43 ຂອງກົດໝາຍສະບັບນີ້ ນອກຈາກເປັນອົງການຄຸ້ມຄອງກິດຈະການໂຮງງານແລ້ວ ຍັງເປັນອົງການກວດກາກິດຈະການໂຮງງານອີກດ້ວຍ. ໃນກໍລະນີທີ່ມີບັນຫາພົວພັນກັບຂະແໜງການອື່ນ ໃຫ້ມີຜູ້ຕາງໜ້າ ຈາກຂະແໜງການນັ້ນເຂົ້າຮ່ວມໃນການກວດກາດັ່ງກ່າວ.

### ມາດຕາ 49. ການກວດກາ

ການກວດກາກິດຈະການໂຮງງານ ແມ່ນການກວດກາ ນັບແຕ່ການຕັ້ງໂຮງງານຈົນຮອດການດໍາເນີນກິດຈະການໂຮງງານ ເພື່ອແນໃສ່ຮັບປະກັນຄວາມຖືກຕ້ອງຕາມມາດຕະຖານເຕັກນິກຂອງອາຄານ, ເຄື່ອງຈັກ ແລະ ອຸປະກອນການຜະລິດ, ມາດຕະຖານຜະລິດຕະພັນ, ຄວາມປອດໄພ, ການນໍາໃຊ້ແຮງງານ, ການປະຕິບັດສິດ ແລະ ພັນທະ, ສຸຂານາໄມ ແລະ ຜົນກະທົບຕໍ່ສິ່ງແວດລ້ອມ. ນອກຈາກນີ້ຍັງມີການກວດກາ ຕາມລະບຽບການ ຂອງຂະແໜງການອື່ນທີ່ກ່ຽວຂ້ອງ.

### ມາດຕາ 50. ຮູບການກວດກາ

ການກວດກາກິດຈະການໂຮງງານ ອຸດສາຫະກໍາ ແລະ ຫັດຖະກໍາ ປຸງແຕ່ງ ດໍາເນີນດ້ວຍຮູບການດັ່ງນີ້:

1. ກວດກາ ຕາມລະບົບປົກກະຕິ;
2. ກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ກວດກາ ແບບກະທັນຫັນ.

## ພາກທີ VI ການແກ້ໄຂ ຂໍ້ຂັດແຍ່ງ, ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 51. ການແກ້ໄຂຂໍ້ຂັດແຍ່ງ

ໃນການດໍາເນີນກິດຈະການໂຮງງານ ອຸດສາຫະກໍາ ແລະ ຫັດຖະກໍາປຸງແຕ່ງຫາກມີຂໍ້ຂັດແຍ່ງພາຍໃນໂຮງງານ ຫລື ລະຫວ່າງຜູ້ດໍາເນີນກິດຈະການໂຮງງານ ກັບເຈົ້າໜ້າທີ່ຂອງລັດ ຫລື ກັບພາກສ່ວນອື່ນໆ, ໃຫ້ທຸກໆຝ່າຍທີ່ກ່ຽວຂ້ອງ ຊອກຫາວິທີແກ້ໄຂ ຂໍ້ຂັດແຍ່ງດັ່ງກ່າວ ດ້ວຍການປຶກສາຫາລື, ການປະນີປະນອມກັນ, ຫລືແກ້ໄຂຕາມວິທີທີ່ໄດ້ກໍານົດໄວ້ໃນສັນຍານັ້ນກ່ອນ. ຖ້າຫາກບໍ່ສາມາດແກ້ໄຂໄດ້ ແຕ່ລະຝ່າຍ ມີສິດສະເໜີຕໍ່ ອົງການທີ່ມີສິດອໍານາດທີ່ກ່ຽວຂ້ອງ ເພື່ອພິຈາລະນາ ແກ້ໄຂ ຂໍ້ຂັດແຍ່ງນັ້ນ.

### ມາດຕາ 52. ນະໂຍບາຍຕໍ່ຜູ້ມີຜົນງານ

ບຸກຄົນ ຫລື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການດຳເນີນກິດຈະການໂຮງງານຈະໄດ້ຮັບການປະຕິບັດນະໂຍບາຍ ແລະ ຍ້ອງຍໍ ຕາມຄວາມເໝາະສົມ.

### ມາດຕາ 53. ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ ຫລື ການຈັດຕັ້ງທີ່ລະເມີດກົດໝາຍສະບັບນີ້ ຈະຖືກກ່າວເຕືອນ, ສຶກສາອົບຮົມ, ໃຊ້ແທນຄ່າເສັຍຫາຍ, ປັບໃໝ ຫລື ລົງໂທດທາງອາຍາ ຕາມແຕ່ລະກໍລະນີ.

### ມາດຕາ 54. ມາດຕະການກ່າວເຕືອນ ແລະ ສຶກສາອົບຮົມ

ບຸກຄົນ ຫລື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ໃນສະຖານເບົາ ເຊັ່ນ: ບໍ່ສະແດງໃບອະນຸຍາດໄວ້ບ່ອນທີ່ເປີດເຜີຍ, ບໍ່ປະຕິບັດພັນທະຂອງຜູ້ດຳເນີນກິດຈະການໂຮງງານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 42 ຂອງກົດໝາຍສະບັບນີ້ ຈະຖືກກ່າວເຕືອນ ຫລື ສຶກສາອົບຮົມ.

### ມາດຕາ 55. ມາດຕະການໃຊ້ແທນຄ່າເສັຍຫາຍ

ບຸກຄົນ ຫລື ການຈັດຕັ້ງທີ່ເຄື່ອນໄຫວກິດຈະການໂຮງງານຫາກ ໄດ້ສ້າງຄວາມເສັຍຫາຍຕໍ່ຜູ້ອອກແຮງງານ, ຕໍ່ພາຍໃນໂຮງງານ ຫລື ຕໍ່ພາຍ ນອກໂຮງງານ ຕ້ອງໃຊ້ແທນຄ່າເສັຍຫາຍນັ້ນ.

### ມາດຕາ 56. ມາດຕະການປັບໃໝ

ບຸກຄົນ ຫລື ການຈັດຕັ້ງ ຈະຖືກປັບໃໝ ຖ້າຫາກໄດ້ລະເມີດກົດໝາຍສະບັບນີ້ ໃນກໍລະນີດັ່ງຕໍ່ໄປນີ້ :

1. ລະເມີດມາດຕາ 42 ຂໍ້ 1, 2, 3 ແລະ ຂໍ້ 4 ເທິງນີ້ ເປັນຄັ້ງທີສອງ;
2. ດຳເນີນກິດຈະການໂຮງງານໂດຍບໍ່ໄດ້ຮັບອະນຸຍາດ;
3. ຂະຫຍາຍໂຮງງານ ໂດຍບໍ່ໄດ້ຮັບອະນຸຍາດ;
4. ປ່ຽນ ຫລື ດັດແປງເຄື່ອງຈັກ ໂດຍບໍ່ໄດ້ຮັບອະນຸຍາດ;
5. ຍົກຍ້າຍເຄື່ອງຈັກໃນໂຮງງານ ໄປສະຖານທີ່ອື່ນ ໂດຍບໍ່ໄດ້ຮັບອະນຸຍາດ;
6. ບໍ່ປ່ຽນໃບອະນຸຍາດດຳເນີນກິດຈະການໂຮງງານ ໃນເມື່ອມີການປ່ຽນແປງຖານະທາງດ້ານກົດໝາຍ;
7. ບໍ່ລາຍງານຕໍ່ເຈົ້າໜ້າທີ່ຂອງຂະແໜງອຸດສາຫະກຳ ແລະ ຫັດຖະກຳ ໃນເມື່ອມີອຸບປະຕິເຫດເກີດຂຶ້ນໃນໂຮງງານ;
8. ຢຸດເຊົາກິດຈະການໂຮງງານ ເກີນກວ່າ 1 ປີ ໂດຍບໍ່ໄດ້ຮັບອະນຸຍາດ;
9. ບໍ່ສະໜອງຕົວຢ່າງຜະລິດຕະພັນໂຮງງານ ຫລື ສຳເນົາເອກະສານທີ່ກ່ຽວຂ້ອງ ຕາມຄຳສັ່ງຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໃນເມື່ອມີການສົງໄສກ່ຽວກັບຄວາມປອດໄພຂອງໂຮງງານ ຫລື ຜະລິດຕະພັນຂອງໂຮງງານ;

10. ບໍ່ປະຕິບັດຕາມຄຳສັ່ງຂອງເຈົ້າໜ້າທີ່ ທີ່ກ່ຽວຂ້ອງໃຫ້ປ່ຽນແປງ ຫລື ປັບປຸງອາຄານໂຮງງານ, ເຄື່ອງຈັກ ແລະ ອື່ນໆ ທີ່ກໍ່ໃຫ້ເກີດສິ່ງລົບກວນ ຫລື ອາດຈະເປັນອັນຕະລາຍຕໍ່ຊີວິດ ແລະ ຊັບສິນຂອງຜູ້ອື່ນ;

11. ຕັດກົ່ວ ທີ່ໜີບໃສ່ເຄື່ອງຈັກ ທີ່ເຈົ້າໜ້າທີ່ໜີບໄວ້ ເພື່ອບໍ່ໃຫ້ແລ່ນເຄື່ອງຈັກ ຊຶ່ງຈະເປັນອັນຕະລາຍ ຕາມທີ່ກຳນົດໄວ້ໃນຂໍ້ 10 ຂອງມາດຕານີ້.

### ມາດຕາ 57. ມາດຕະການທາງອາຍາ

ໃນກໍລະນີທີ່ການລະເມີດກົດໝາຍສະບັບນີ້ ຫາກເປັນການກະທຳຜິດທາງອາຍາ ເຊັ່ນ: ປອມແປງ ໃບອະນຸຍາດດຳເນີນກິດຈະການໂຮງງານ ຫລື ເອກະສານທີ່ກ່ຽວຂ້ອງ, ບໍ່ປະຕິບັດມາດຕະການທີ່ຮັບປະກັນຄວາມປອດໄພໂຮງງານ ຊຶ່ງພາໃຫ້ຄົນເສັຍຊີວິດ, ເສັຍສຸຂະພາບຈະຖືກລົງໂທດຕາມກົດໝາຍອາຍາ.

### ມາດຕາ 58. ມາດຕະການໂທດເພີ້ມ

ນອກຈາກໂທດທີ່ໄດ້ກຳນົດໄວ້ໃນມາດຕາ 56 ແລະ 57 ເທິງນີ້ແລ້ວ ຜູ້ລະເມີດອາດຈະຖືກປະຕິບັດມາດຕະການໂທດເພີ້ມອີກ ເຊັ່ນ: ໂຈະການດຳເນີນກິດຈະການໂຮງງານ ຫລື ຖອນໃບອະນຸຍາດ.

## ພາກທີ VII ບົດບັນຍັດສຸດທ້າຍ

### ມາດຕາ 59. ການຈັດຕັ້ງປະຕິບັດ

ມອບໃຫ້ລັດຖະບານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດ ກົດໝາຍສະບັບນີ້.

### ມາດຕາ 60. ຜົນສັກສິດ

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫລັງເກົ້າສິບວັນ ນັບແຕ່ມື້ປະທານປະເທດ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ອອກລັດຖະດຳ ລັດປະກາດໃຊ້ເປັນຕົ້ນໄປ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 3 ເມສາ 1999

ປະທານສະພາແຫ່ງຊາດ

ສະໝານ ວິຍະເກດ